Diploma Programme
Programme du diplôme
Programa del Diploma

# Lao A: literature – Higher level – Paper 1
# Lao A : littérature – Niveau supérieur – Épreuve 1
# Laosiano A: literatura – Nivel superior – Prueba 1

Friday 8 May 2015 (afternoon)
Vendredi 8 mai 2015 (après-midi)
Viernes 8 de mayo de 2015 (tarde)

2 hours / 2 heures / 2 horas

---

## Instructions to candidates

- Do not open this examination paper until instructed to do so.
- Write a literary commentary on one passage only.
- The maximum mark for this examination paper is **[20 marks]**.

## Instructions destinées aux candidats

- N’ouvrez pas cette épreuve avant d’y être autorisé(e).
- Rédigez un commentaire littéraire sur un seul des passages.
- Le nombre maximum de points pour cette épreuve d’examen est de **[20 points]**.

## Instrucciones para los alumnos

- No abra esta prueba hasta que se lo autoricen.
- Escriba un comentario literario sobre un solo pasaje.
- La puntuación máxima para esta prueba de examen es **[20 puntos]**.


© International Baccalaureate Organization 2015

International Baccalaureate
Baccalauréat International
Bachillerato Internacional

https://xtremepape.rs/

ໃຫ້ເຈົ້າວິຈານໃນແງ່ວັນນະຄະດີຫ**ນຶ່ງເລື່ອງ**ທີ່ເຈົ້າເລືອກຈາກສອງເລື່ອງຕໍ່ໄປນີ້

**1.**

ບັດນີ້ ຂ້າຈັກແປງສານສ້ອຍ ນິທານທຳມາກ່າວ
ປັນຫາເລີກແລບລົ້ນ ມາເວົ້າສູ່ຟັງ
ໃຜຜູ້ປັນຍາກວ້າງ ອັດທິບາຍແປ່ປານ ໄປເນີ
ຝູງໝູ່ນັກປາດເຈົ້າ ຄະນຶງຮູ້ຮຳເພິງ ຫັ້ນທ້ອນ
ບັດນີ້ ຍັງມີນັກຄະເຣດກວ້າງ ເມືອງໃຫຍ່ປາງປັດຖົມ
ຝູງໝູ່ມີຄົນຫລາຍ ຊົ່ວລາງລືໄວ້
ຊື່ວ່າໂຊໂກກວ້າງ ເມືອງຫລວງຍົດໃຫຍ່
ຊ້າງມິ່ງມ້າ ຫລາຍລ້ານອະເນກນອງ
ນັກສະໜົມນ້ອຍ ນາລີຫລາຍໝື່ນ
ມະເຫສີແກ້ວ ທຽມບາງງາມຍິ່ງ
ຄືສິງໂຂນຢູ່ດ້າວ ດົງກວ້າງຮູບງາມ
ໂສມສນິດໜ້າ ບົວຄຳເຫລືອງຫລົ່ນ
ຮູບແຈ່ມເຈົ້າ ຜາງຮ້າຍຄືພະອິນ
ຝູງໝູ່ ເສນາລ້ອມ ທໍປາງບໍ່ມີຂາດ
ແສນຊ່ຳທ້າວ ແຝງເຝົ້າປ່ຽວພອຍ
ພະກໍມີລູກນ້ອຍ ນາມມະໜໍ່ກຸມມານ
ຊື່ວ່າໂສກາບາ ຮູບງາມປານແຕ້ມ
ໂສມງາມທ້າວ ຜິວແມນເຫລ່າຫລໍ່
ຄືພົມມະວາດໄວ້ ພະອິນແຕ້ມເກິ່ງລິງ
ສິບຫົກຂວບເຂົ້າ ບາຄານສອນບ່າວ
ບາກໍເຊີຍຊົມຊ້ອນ ສາວຣາມນອນປ່ຽວ
ບັດນີ້ ພະບາດເຈົ້າ ທົ່ງຣາຊສົມບັດ
ຄຶດຈັກວາງນະຄອນຫລວງ ແກ່ກຸມມານທ້າວ
ທໍ່ວາ ຍັງບໍ່ມີເມັຍຊ້ອນ ມະເຫສີທຽມຜ່າງ
ແຕ່ນັ້ນ ສະເພີກພ້ອມ ຝູງໝູ່ເສນາ
ເຂົາກໍ ແໜນາງງາມ ຕ່າງເມືອງໄກທ້າວ
ທານໂທດ ຂ້າຂາບພື້ນ ຊຸລີບາດປາທາ
ຕາມທີ່ຄວາມເຂົາເຊັງ ຊ່ຳມາເຖິງພີ້
ເຂົາວ່າ ໂຍທິກາແກ້ວບົວຄຳໄຂກາບ
ເນື້ອຍິ່ງຍ້ອຍ ງາມລົ້ນລື່ນຄົນ
ມົນທົນຕ້າງ ເກສາປັກປິ່ນ
ປິ່ນວິ່ນໜ້າ ງາມລົ້ນດັ່ງຊະນີ [...]

https://xtremepape.rs/

ແຕ່ນັ້ນ ໂສກາບາທ້າວ ອອກເດີນທາງເວລາເຊົ້າ
ກາຍແດນດ້າວ ເມືອງພູລົມຫລາຍຄ່ຳ
ຫລາຍຊ່ຳໄມ້ ປານແລ້ງເປົ່າເຢັນ
ຂ້າມທົ່ງກວ້າງ ເຫັນໝູ່ມັດສາ
ທັງມັງກອນໝູ່ຊີວແກມກຸ້ງ
ຄັນເຖິງຄຸງຄານ້ຳ ທີວລະພີເຕັ້ນຕື່ນ
ເສືອໂຄງລີ້ ໃນກ້ອນຫລືບວັງ

ບໍ່ປາກົດຊື່ຜູ້ແຕ່ງ *ນິທານທ້າວໂສກາບາ* (ບໍ່ປາກົດປີແຕ່ງ)



https://xtremepape.rs/

**2.**

“ແມ່ສີເອີຍ ຂ້ອຍມາຄຶດເບິ່ງແລ້ວ ຄວາຍເຮົາມີກະສີ່ຫ້າໂຕ ຂາຍຊື້ຣົດໄຖນາ ກະພໍຢູ່ດອກ”

ພໍ່ສີເວົ້ານຳເມັຍຫລັງຈາກກິນເຂົ້າແລງແລ້ວ

“ຊື້ມາເຮັດຫຍັງເກາະ?”

“ຣີ! ເຈົ້າກະເຮ່າຖາມ ກະຊື້ມາໄຖນາລະບໍ້!”

“ພໍ່ມັນເອີຍ ຕາມເຂົ້າວ່າເຮົາອົດເອົາສາກ່ອນຊິບໍ່ດີກ່ອນບໍ່ ນາເຮົາກະມີບໍ່ຫລາຍ ໃຊ້ຄວາຍໄຖເອົາກະພໍລ້ອມຢູ່ດອກ”

“ອັນເລື່ອງລ້ອມກະລ້ອມຫັ້ນ ແຕ່ມັນເມື່ອຍ ຊາຫຍັງເຈົ້າໂລດບໍ່ໄດ້ໄຖນຳຂ້ອຍ”

“ບໍ່ແມ່ນຈັ່ງຊັ້ນດອກເຖົ້າເອີຍ ຂ້ອຍພຽງແຕ່ວ່າຖ້າເຮົາໃຊ້ຄວາຍໄຖມັນຊິປະຢັດລາຍຈ່າຍ” [...]

ແມ່ສີພະຍາຍາມອະທິບາຍແຕ່ພໍ່ສີບໍ່ຫົວຊາ ລາວເອົາແຕ່ຮູລາວ

“ສະໄໝນີ້ມັນສະໄໝໃດແລ້ວ ເຈົ້າຍັງຊິໃຫ້ຂ້ອຍຍ່າງນຳກົ້ນຄວາຍຢູ່ຫວະ? ເຮັດແນວໃດບ້ານເມືອງຊິຈະເລີນ ຄົນເຮົາຍັງຝືນວິທະຍາສາດຢູ່” [...]

ໃນເມື່ອບໍ່ສາມາດສະກັດກັ້ນແນວຄຶດຂອງຜົວໄດ້ແມ່ສີກໍຈຳໃຈເລີຍຕາມຜົວ ຄວາຍອີດ່ອນຕູ້ພ້ອມທັງລູກຫລານຂອງມັນ ຮວມທັງບັກເຖິກໜໍາຖືກລາກດຶງຂຶ້ນລົດ ແມ່ສີແນມນຳລົດຄັນນັ້ນພໍປານວ່າຄວາຍທີ່ຢູ່ໃນລົດນັ້ນເປັນລູກເປັນຫລານຂອງລາວເອງ ເມັດນ້ຳໃສໆຄ່ອຍໆໄຫລລົງມາອາບແກ້ມຂອງແມ່ ແຕ່ແມ່ບໍ່ຍອມໃຫ້ຜົວເຫັນມັນ [...]

ພໍ່ສີນອນປິ່ນປົວຢູ່ໂຮງໝໍແມ່ສີເອົາໃຈໃສ່ເບິ່ງແຍງຜົວເປັນຢ່າງດີ ໃນຂະນະທີ່ແມ່ສີພວມເອົາແຜ້ແພຈຸບນ້ຳເຊັດໜ້າໃຫ້ຜົວຢູ່ນັ້ນ ພໍ່ສີເວົ້າຂຶ້ນຄ່ອຍໆວ່າ

“ແມ່ມັນເອີຍ ຂ້ອຍວ່າຢາກຂາຍລົດໄຖນາຄັນນັ້ນ ເຈົ້າຊິວ່າຈັ່ງໃດ”

“ເອົາ! ຂາຍແລ້ວຊິເອົາເງິນໃສມາຕື່ມຊື້ຄັນໃໝ່?”

“ຂ້ອຍບໍ່ຊື້ຄັນໃໝ່ຄັນເກົ່າຫຍັງດອກ ຂອຍຊິຊື້ຄວາຍ ທຳອິດຂອຍຊິຊື້ຄວາຍເຖິກມາໄວ້ເຮັດນາກ່ອນ ຈາກນັ້ນຂ້ອຍຊິຫາຊື້ເອົາຄວາຍແມ່ນາງຕື່ມຈັກໂຕ”

“ເຈົ້າວ່າຫຍັງເກາະເຖົ້າ?”

“ຂ້ອຍບອກວ່າຂ້ອຍຊິຂາຍລົດໄຖນາໄປຊື້ຄວາຍມາລ້ຽງເພາະຄຶດຄັກແລ້ວວ່າລະດັບເສດຖະກິດພໍປານເຮົານີ້ ຍັງບໍ່ທັນສົມຄວນນຳໃຊ້ລົດໄຖນາດອກ” [...]

ອີກໜຶ່ງອາທິດຕໍ່ມາຫລັງຈາກພໍ່ສີອອກໂຮງໝໍແລ້ວໄທບ້ານກໍບໍ່ເຫັນລົດໄຖນາຈອດຢູ່ກ້ອງລ່າງເຮືອນພໍ່ສີອີກ ຍາມແລງເກືອບທຸກມື້ມັກຈະແນມເຫັນພໍ່ສີຈູງຄວາຍບັກກ້ອມລ້ຽງ ລາງເທື່ອກະເຫັນ ລາວຫາເຫົ້າຫາເຫັບໃຫ້ບັກກອມ ເບິ່ງລາວພຽນບັກກອມພໍປານມັນເປັນລູກຊາຍຫລ້າຂອງລາວເອົາຊີ່ງ

ປານິນນ້ອຍ *ເມື່ອທ່ງນາຂາດຄວາຍ* ປີພິມ (2003)

https://xtremepape.rs/